International Labour Organization



# ການຝຶກອົບຮົມກ່ຽວກັບການປົກປ້ອງ ສັງຄົມ ໃນ ສປປ ລາວ





# ການຝຶກອົບຮົມການປົກປ້ອງສັງຄົມ ໃນ ສປປ ລາວ

## ຫຼັກສູດ 1

## ການນຳສະເໜີການປົກປ້ອງສັງຄົມ

# ກິດຈະກໍາ 4: ຄໍາສັບ ແລະ ຄວາມໝາຍ

| | | |
|---|---|---|
| | **ຂັ້ນຕອນ:** | 1. ແບ່ງຜູ້ເຂົ້າຮ່ວມອອກເປັນ 3- 4 ກຸ່ມ ຫຼື ແບ່ງອອກຕາມບ່ອນນັ່ງຂອງຜູ້ເຂົ້າຮ່ວມ<br>2. ບອກຕາງໜ້າຂອງແຕ່ລະກຸ່ມເລືອກເອົາ 1-2 ຄໍາສັບດັ່ງຕໍ່ໄປນີ້: |

| | | |
|---|---|---|
| ປົກປ້ອງສັງຄົມ | ປະກັນສັງຄົມ | ສະຫວັດດີການສັງຄົມ |
| ກຸ່ມບອບບາງ/ດ້ອຍໂອກາດ | ແຮງງານນອກລະບົບ | ປະກັນສຸຂະພາບ |
| ກອງທຶນທີ່ບໍ່ປະກອບເງິນສົບທົບ | ວຽກງານສາທາລະນະ | ການປົກປ້ອງສັງຄົມຂັ້ນພື້ນຖານ |

International Labour Organization

## ກິດຈະກຳ 4: ຄຳສັບ ແລະ ຄວາມໝາຍ

| | | |
|---|---|---|
| | **ຂັ້ນຕອນ:** | 3. ໃຫ້ແຕ່ລະກຸ່ມສົນທະນາເຖິງຄວາມໝາຍຂອງຄຳສັບ<br>4. ກຸ່ມທີ່ຕອບຖືກຕ້ອງ ຈະໄດ້ຮັບໜຶ່ງຄະແນນ. ຖ້າຄຳນິຍາມຜິດ, ໃຫ້ໂອກາດແກ່ກຸ່ມອື່ນຕອບ.<br>5. ສະແດງຄຳນິຍາມທີ່ແທ້ຈິງຂອງຄຳສັບ. ອະທິບາຍວ່າ ນີ້ແມ່ນຄຳນິຍາມຈາກຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ.<br>6. ກຸ່ມທີ່ມີຄະແນນສູງສຸດ ແມ່ນກຸ່ມທີ່ຊະນະເກມນີ້. |

# ພາກທີ 2

## ແນວຄວາມຄິດພື້ນຖານ ແລະ ຄວາມເປັນມາຂອງການປົກປ້ອງສັງຄົມ

- *ລົງເລິກເຖິງວິທີທີ່ລະບົບປົກປ້ອງສັງຄົມຈະຊ່ວຍຕອບສະໜອງຄວາມຕ້ອງການຂອງປະຊາຊົນລາວ*
- *ລົງເລິກເຖິງຄວາມໝາຍຂອງການປົກປ້ອງສັງຄົມ*
- *ລົງເລິກເຖິງຄວາມໝາຍຂອງວົງຈອນຊີວິດຕໍ່ກັບວິທີການໃນການປົກປ້ອງສັງຄົມ*

# ຫຼິ້ນເກມ ຄຳສັບ ແລະ ຄວາມໝາຍ



# Social protection jargon

ປົກປ້ອງສັງຄົມ

ປະກັນສັງຄົມ

ສະຫວັດດີການສັງຄົມ

ກຸ່ມບອບບາງ/ດ້ອຍໂອກາດ

ແຮງງານນອກລະບົບ

ປະກັນສຸຂະພາບ

ກອງທຶນທີ່ບໍ່ປະກອບເງິນສົບທົບ

ວຽກງານສາທາລະນະ

ການປົກປ້ອງສັງຄົມຂັ້ນພື້ນຖານ

International Labour Organization

# ພາກທີ 2

## ແນວຄວາມຄິດພື້ນຖານ ແລະ ຄວາມເປັນມາຂອງການປົກປ້ອງສັງຄົມ

### ຄໍາສັບ ແລະ ນິຍາມຂອງການປົກປ້ອງສັງຄົມ

International Labour Organization

## ການປົກປ້ອງສັງຄົມ

- ເປັນ**ຊຸດນະໂຍບາຍ**ທີ່ຖືກອອກແບບມາ**ເພື່ອຫຼຸດຜ່ອນ ແລະ ປ້ອງກັນຄວາມທຸກຍາກ, ຄວາມບອບບາງ ແລະ ການຖືກຈຳແນກຈາກສັງຄົມ** ໃນຕະຫຼອດໄລຍະຂອງຮອບວຽນຊີວິດ.
- ວາງນະໂຍບາຍເລົ່ານີ້ທັງໝົດໂດຍຜ່ານການປະສົມປະສານລະຫວ່າງ **ກອງທຶນປະກອບເງິນສົມທົບ(ປະກັນສັງຄົມ ແລະ ປະກັນສຸຂະພາບ)** ແລະ **ບໍ່ປະກອບເງິນສົມທົບ ( ສະຫວັດດີການສັງຄົມ).**

International Labour Organization

## ປະກັນສັງຄົມ

- ເປັນກອງທຶນທີ່ຊ່ວຍ**ປົກປ້ອງສະມາຊິກກອງທຶນປະກັນສັງຄົມແຫ່ງຊາດ** ແລະ **ຄອບຄົວຂອງເຂົາເຈົ້າ ຈາກ** ຄວາມສ່ຽງໃນຕະລອດວົງຈອນຊີວິດ
- ແຫຼ່ງເງິນທຶນແມ່ນມາຈາກການຈ່າຍສົບທົບຈາກ**ຜູ້ອອກແຮງງານ** ແລະ **ຜູ້ໃຊ້ແຮງງານ**

International Labour Organization

# ສະຫວັດດີການສັງຄົມ

- ອອກແບບມາເພື່ອ**ປ້ອງກັນ ແລະ ແກ້ໄຂບັນຫາທາງສັງຄົມ** ແລະ **ສົ່ງເສີມການພັດທະນາສັງຄົມ ລວມທັງຕາໜ່າງຄວາມປອດໄພທາງສັງຄົມ**
- ເປັນການບໍລິການຈຳເປັນພື້ນຖານ ເພື່ອຊ່ວຍ **ຕອບສະໜອງຄວາມຕ້ອງການຂັ້ນພື້ນຖານຂອງການພັດທະນາຊີວິດການເປັນຢູ່ແບບເໝາະສົມໄດ້** - ລວມທັງການມີການສຶກສາທີ່ດີ, ສຸຂະພາບດີ, ທີ່ພັກອາໄສທີ່ພຽງພໍ, ມີວຽກເຮັດງານທຳ ແລະ ມີລາຍຮັບທີ່ເໝາະສົມ - **ເພື່ອຮັບປະກັນດ້ານສະຫວັດດີການ ແລະ ຄວາມໝັ້ນຄົງທາງສັງຄົມ.**

International Labour Organization

# ກຸ່ມບອບບາງ/ຄົນດ້ອຍໂອກາດ

- ໂດຍສະເພາະກຸ່ມທີ່ຖືກຄຸກຄາມ**ຈາກສັງຄົມ, ເສດຖະກິດ, ການເມືອງ ຫຼື ຄວາມກົດດັນອື່ນໆ.**

International Labour Organization

# ແຮງງານນອກລະບົບ

- ຜູ້ອອກແຮງງານ**ທີ່ເຮັດວຽກຢູ່ນອກຫົວໜ່ວຍທຸລະກິດທີ່ໄດ້ຂຶ້ນທະບຽນຖືວ່າເປັນແຮງງານນອກລະບົບ ຫຼືຈ້າງງານຕົນເອງ**

International Labour Organization

## ປະກັນສຸຂະພາບ

- ຮັບປະກັນ**ການເຂົ້າເຖິງການປິ່ນປົວຈຳເປັນພື້ນຖານ**
- ແຫຼ່ງເງິນທຶນແມ່ນມາຈາກການ**ຈ່າຍຮ່ວມ** ແລະ ຈາກ**ການຈ່າຍສົມທົບ/ຖົມຂຸມຂອງລັດຖະບານ**

International Labour Organization

## ກອງທຶນບໍ່ປະກອບເງິນສົບທຶນ

- ເປັນກອງທຶນທີ່ປະຊາຊົນ**ບໍ່ຈຳເປັນຕ້ອງຈ່າຍເງິນສົບທຶນ**ເພື່ອເກີດສິດຮັບອຸດໜູນ

International
Labour
Organization

# ໂຄງການ ວຽກງານສາທາລະນະ

- **ສະໜອງລາຍໄດ້ໃຫ້ແກ່ຜູ້ທຸກຍາກ**ໂດຍຜ່ານລະບົບການຈ້າງງານ
- ຖືກອອກແບບມາ**ເພື່ອລາຍໄດ້ທີ່ສະໝ່ຳສະເໝີ** ໂດຍສະເພາະໃນຊ່ວງທີ່ “ຝືດເຄືອງ” ຫຼື “ອຶດຫິວ”
- ສ້າງລະບົບ**ພື້ນຖານໂຄງລ່າງ** (ຕົວຢ່າງ ສ້າງຫົນທາງໃນເຂດຊົນນະບົດ, ສ້າງລະບົບຊົນລະປະທານ, ສ້າງສິ່ງອຳນວຍຄວາມສະດວກໃນການກັກເກັບນ້ຳ, ສວນປູກຕົ້ນໄມ້, ສ້າງໂຮງຮຽນ ແລະ ສະຖານບໍລິການດ້ານສາທາລະນະສຸກ)

# ການປົກປ້ອງສັງຄົມຂັ້ນພື້ນຖານ

- ເປັນຊຸດຄໍ້າປະກັນຂັ້ນພື້ນຖານທີ່ຮັບປະກັນວ່າທຸກຄົນທີ່ຂາດເຂີນຈະສາມາດເຂົ້າເຖິງສະຖານບໍລິການປິ່ນປົວຈຳເປັນພື້ນຖານ ແລະ ຄໍ້າປະກັນລາຍຮັບຂັ້ນພື້ນຖານໃນຕະຫຼອດຮອບວຽນຊີວິດ
- ຮັບປະກັນການເຂົ້າເຖິງຜະລິດຕະພັນ ແລະ ການບໍລິການໄດ້ຢ່າງພຽງພໍຕາມຄວາມຈຳເປັນ

# ການປົກປ້ອງສັງຄົມແມ່ນຫຍັງ?

ຄວາມສ່ຽງທີ່ອາດຈະເກີດຂຶ້ນໃນຕະຫຼອດຮອບວຽນຊີວິດ ເຊິ່ງມີຜົນກະທົບທາງດ້ານການເງິນ:



International Labour Organization

ກັບມາເບິ່ງຄຳນິຍາມອີກ

## ການປົກປ້ອງສັງຄົມ

- ເປັນ**ຊຸດນະໂຍບາຍ**ທີ່ຖືກອອກແບບມາ**ເພື່ອຫຼຸດຜ່ອນ ແລະ ປ້ອງກັນຄວາມທຸກຍາກ, ດ້ອຍໂອກາດ ແລະ ການຖືກຈຳແນກທາງສັງຄົມ** ຕະຫຼອດໄລຍະຂອງຮອບວຽນຊີວິດ.

# ມາດຕະຖານສາກົນຕໍ່ກັບພື້ນຖານການປົກປ້ອງສັງຄົມ

- **ວາງພັນທະ ແລະ ຂໍ້ແນະນຳ**ໃຫ້ປະເທດຕ່າງໆປະຕິບັດຕາມ
- **ຊ່ວຍໃນການຮ່າງ**ກົດໝາຍ ແລະ ລະບຽບການ ແລະ **ໃນການອອກແບບ ແລະ ຈັດຕັ້ງປະຕິບັດແຜນງານປົກປ້ອງສັງຄົມ.**

International Labour Organization

# ສົນທິສັນຍາ ແລະ ຄຳແນະນຳ

## ສປປ ລາວ ໄດ້ເຂົ້າຮ່ວມປະຊາຄົມສາກົນໃນການຮັບຮອງເອົາສົນທິສັນຍາ ແລະ ບັນດາເປົ້າໝາຍ:

**ຖະແຫຼງການສາກົນກ່ຽວກັບສິດທິມະນຸດ (1948)**

- ການປົກປ້ອງສັງຄົມແມ່ນຍຶດໝັ້ນໃນຖະແຫຼງການສະບັບນີ້, ຕາມທີ່ກຳນົດໄວ້ໃນມາດຕາ 22 ແລະ 25
- ທຸກຄົນມີສິດໃນການເຂົ້າເຖິງການບໍລິການດ້ານສາທາລະນະສຸກ, ການສຶກສາ, ມີວຽກເຮັດງານທຳທີ່ເຫມາະສົມ, ແລະ ເຂົ້າເຖິງມາດຕະຖານການດຳລົງຊີວິດໃນຕະຫຼອດຮອບວຽນຊີວິດ

International
Labour
Organization

## ສົນທິສັນຍາສາກົນວ່າດ້ວຍສິດທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທໍາ

- ຄວາມຄິດເຫັນທົ່ວໄປ 19 ກ່ຽວກັບສິດໃນການປະກັນສັງຄົມ (1966)
- ບໍ່ມີໃຜຄວນດໍາລົງຊີວິດຢູ່ຕໍ່າກວ່າມາດຕະຖານການດໍາລົງຊີວິດ ແລະ ຢ່າງໜ້ອຍທຸກຄົນຄວນຈະເຂົ້າເຖິງການບໍລິການສັງຄົມທີ່ຈໍາເປັນ. (ຂໍ້ 9, 11-13)

International Labour Organization

# ສົນທິສັນຍາວ່າດ້ວຍມາດຕະຖານປະກັນສັງຄົມຂັ້ນຕ່ຳ, 1952 (ສະບັບເລກທີ 102) ແລະ ຄຳແນະນຳກ່ຽວກັບການປົກປ້ອງສັງຄົມຂັ້ນພື້ນຖານ ຂອງ ILO (ສະບັບເລກທີ 202)

- ເປັນທິດນຳໃນການສ້າງຕັ້ງລະບົບປົກປ້ອງສັງຄົມຂັ້ນພື້ນຖານໃນລະດັບຊາດ ແລະ ຢືນຢັນວ່າ ລະບົບປົກປ້ອງສັງຄົມນີ້ເໝາະສົມກັບສະພາບເສດຖະກິດຂອງທຸກປະເທດ.
- ລະບົບປົກປ້ອງສັງຄົມຂັ້ນພື້ນຖານ ສາມາດນຳໄປ**ເປີດນຳໃຊ້, ພັດທະນາ ແລະ ຄຸ້ມຄອງໄດ້ໃນທຸກບ່ອນ.**


Solidity and stability
Comprehensiveness
Accountability
Trust and Awareness
Adequacy
Good governance
Medical Care
Sickness
Disability/ Invalidity
Unemployment
Employment Injury
Maternity
Survivors
Children/ Family
Old-age
National Social Protection System
C102
Transparency and compliance mechanisms
Collective financing
Rights defined by law
Minimum protection levels
Financial sustainability
Participatory management

International Labour Organization

# ສິນທິສັນຍາ ແລະ ຄຳແນະນຳ

**ບັນດາຫຼັກການໃນສິນທິສັນຍາ ເລກທີ 102**

| | |
|---|---|
| **ຄວາມຮັບຜິດຊອບຂອງລັດ** | • ສະໜອງ ແລະຮັບປະກັນຊຸດອຸດໜູນຕາມທີ່ລະບຸໄວ້ໃນກົດໝາຍ<br>• ຊີ້ນຳ ແລະ ຄຸ້ມຄອງ ບັນດາສະຖາບັນ ແລະ ໜ່ວຍບໍລິການທີ່ກ່ຽວຂ້ອງ |
| **ຄວາມເໝາະສົມ & ການຄາດເດົາ** | • ຊຸດອຸດໜູນຄວນປັບຕົວໄປຕາມຄ່າຄອງຊີບ ແລະ ລາຍໄດ້ທົ່ວໄປ<br>• ກຳນົດຊຸດອຸດໜູນ ແລະ ໄລຍະເວລາ ຢູ່ໃນລະດັບທີ່ຕໍ່າ |
| **ການໂຮມທຶນ** | • ຮ່ວມທຶນເຂົ້າກັນຜ່ານການຈ່າຍສົມທົບລະຫວ່າງ ຜູ້ໃຊ້ແຮງງານ, ຜູ້ອອກແຮງງານ ແລະ ຈາກອາກອນ, ແຕ່ຕ້ອງຮັບປະກັນບໍ່ໃຫ້ຕົກເປັນພາລະແບກຫາບດ້ານການເງິນ |
| **ສິດໃນການຟ້ອງຮ້ອງ** | • ມີສິດໃນການຟ້ອງຮ້ອງໃນກໍລະນີຖືກປະຕິເສດການຮັບອຸດໜູນ ຫຼື ສາມາດຮ້ອງທຸກກ່ຽວກັບຄຸນນະພາບ ຫຼື ປະລິມານຂອງອຸດໜູນ |
| **ຄວາມກ້າວໜ້າ** | • ຄ່ອຍໆຂະຫຍາຍຕາໜ່າງການປົກຄຸມ |

International Labour Organization

## ບັນດາຫຼັກການໃນຂໍ້ແນະນຳ ເລກທີ 102

| | |
|---|---|
| **ທົ່ວປວງຊົນ** | • ປົກຄຸມປະຊາກອນທົ່ວປວງຊົນ |
| **ບໍ່ເລືອກປະຕິບັດ** | • ບົນພື້ນຖານການປະຕິບັດແບບເທົ່າທຽມ (ຄວາມສະເໝີພາບທາງເພດ)<br>• ຕອບສະໜອງຕໍ່ຄວາມຕ້ອງການພິເສດ.<br>• ການລວມຕົວທາງສັງຄົມ, ລວມເຖິງເສດຖະກິດນອກລະບົບ. |
| **ໂປ່ງໃສ** | • ການຄຸ້ມຄອງການເງິນທີ່ມີຄວາມຮັບຜິດຊອບ ແລະ ສົມເຫດສົມຜົນ, ບໍລິຫານ |
| **ສິດ ແລະ ກຽດສັກສີ** | • ເຄົາລົບສິດທິ ແລະ ກຽດສັກສີຂອງປະຊາຊົນ<br>• ໃຫ້ຄວາມເຄົາລົບຢ່າງເຕັມທີ່ໃນການເຈລະຈາຕໍ່ລອງ ແລະ ອິດສະຫຼະພາບໃນການຮ່ວມຕົວຂອງຜູ້ອອກແຮງງານ |
| **ການສະໜອງບໍລິການ** | • ການບໍລິການສາທາລະນະທີ່ມີຄຸນນະພາບສູງ ຈະຊ່ວຍເພີ່ມປະສິດທິພາບໃນການສະໜອງບໍລິການ |
| **ການປະເມີນຜົນ** | • ມີການຕິດຕາມທີ່ເປັນປົກກະຕິ ແລະ ປະເມີນຜົນເປັນໄລຍະ |

International Labour Organization

# ເປົ້າໝາຍການພັດທະນາແບບຍືນຍົງ (SDGs)

- ສູ້ຊົນລຶບລ້າງຄວາມທຸກຍາກ ແລະ ສົ່ງເສີມການພັດທະນາເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມຢ່າງຍືນຍົງ.
- ມີຂົງເຂດບູລິມະສິດ ສໍາລັບການຈັດຕັ້ງປະຕິບັດຂອງລັດຖະບານ (ແຜນພັດທະນາເສດຖະກິດ - ສັງຄົມ ຄັ້ງທີ 8)
- ສປປ ລາວ ຈະສູ້ຊົນເພື່ອບັນລຸ**ເປົ້າໝາຍການພັດທະນາແບບຍືນຍົງ ໃນປີ 2030**
- **ຍຸດທະສາດການປົກປ້ອງສັງຄົມ** ຈະເລືອກເປົ້າໝາຍ ແລະ ຈຸດປະສົງຂອງມັນເອງຢ່າງຮອບຄອບ ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ ທີ່ເຊື່ອມໂຍງໂດຍກົງເຖິງການປົກປ້ອງສັງຄົມ.

International
Labour
Organization

# ການປົກປ້ອງສັງຄົມປະກອບສ່ວນເຂົ້າໃນ:




**ເປົ້າໝາຍ 1.3**
ສ້າງຕັ້ງລະບົບ
ປົກປ້ອງສັງຄົມ
ສໍາລັບທຸກຄົນ




**ເປົ້າໝາຍ 3.8**
ບັນລຸເປົ້າໝາຍ
ປົກຄຸມສຸຂະພາບ
ທົ່ວປວງຊົນ




**ເປົ້າໝາຍ 5.4**
ຮັບຮູ້ ແລະ ໃຫ້
ຄຸນຄ່າຂອງການ
ເບິ່ງແຍງ ແລະ
ການເຮັດວຽກ
ເຮືອນທີ່ບໍ່ມີລາຍ
ຮັບ




**ເປົ້າໝາຍ 8.5**
ໃນປີ 2023,
ບັນລຸເປົ້າໝາຍ
ການມີວຽກເຮັດ
ງານທໍາແບບ
ເຕັມສ່ວນ, ມີປະ
ສິດທິຜົນ ແລະ
ມີຄຸນຄ່າສໍາຫຼັບ
ທຸກຄົນ




**ເປົ້າໝາຍ 10.4**
ຮັບຮອງ
ນະໂຍບາຍ ແລະ
ບັນລຸຄວາມສະເ
ໝີພາບອັນຍິ່ງ
ໃຫຍ່ ແລະ ຕໍ່
ເນື່ອງ

# ການປົກປ້ອງສັງຄົມຂັ້ນພື້ນຖານແມ່ນຫຍັງ?

- ຫຼັກຄ້ຳປະກັນສັງຄົມຂັ້ນພື້ນຖານໃນລະດັບຊາດ ເພື່ອປ້ອງກັນ ຫຼື ແກ້ໄຂຄວາມທຸກຍາກ, ຄວາມດ້ອຍໂອກາດ ແລະ ການຖືກຈຳແນກຈາກສັງຄົມຂອງທຸກຄົນ.

**4 ຫຼັກຄໍ້າປະກັນຂອງການປົກປ້ອງສັງຄົມຂັ້ນພື້ນຖານ**

**ມີການບໍລິການສາທາລະນະສຸກຈໍາເປັນພື້ນຖານ**, ລວມທັງການເກີດລູກສໍາລັບປະຊາກອນທຸກຄົນ

**ຄໍ້າປະກັນລາຍຮັບພື້ນຖານ**ສໍາລັບເດັກນ້ອຍ, **ແລະ ເຂົ້າເຖິງໂພຊະນາການ, ການດູແລເບິ່ງແຍງ ແລະ ການສຶກສາ**

ຄໍ້າປະກັນ**ລາຍຮັບຂັ້ນພື້ນຖານສໍາລັບປະຊາກອນໃນໄວເຮັດວຽກ**, ທີ່ເຈັບປ່ວຍ, ວ່າງງານ, ເກີດລູກ. ພິການ ແລະ ອື່ນໆ

- **ມີເງິນບໍານານ, ມີການເບິ່ງແຍງດູແລ ແລະ**
- **ມີການບໍລິການສໍາລັບຜູ້ສູງອາຍຸ** ແລະ **ຜູ້ພິການ**

International Labour Organization

# 4 ຫຼັກຄ້ຳປະກັນຂອງການປົກປ້ອງສັງຄົມຂັ້ນພື້ນຖານ ແລະ ນະໂຍບາຍການປົກປ້ອງສັງຄົມໂດຍທົ່ວໄປ

| ກອງທຶນຈ່າຍເງິນສົບທົບ<br>(ອຸດໜູນທີ່ໄດ້ຮັບຈາກການສົບທົບທຶນ ຫຼື ຈາກການຖືກປົກຄຸມແບບທົ່ວປວງຊົນ) | ພື້ນຖານການປົກປ້ອງສັງຄົມ | ກອງທຶນບໍ່ປະກອບເງິນສົມທົບ<br>(ອຸດໜູນທີ່ໄດ້ຮັບໂດຍບໍ່ມີການສົມທົບທຶນ, ໃນກໍລະນີທີ່ຈຳເປັນ ຫຼື ທຸກຍາກ ຫຼື ບໍ່ມີເງື່ອນໄຂໃດໆເລີຍ) |
|---|---|---|
| ອຸດໜູນປິ່ນປົວສຸຂະພາບສຳລັບສະມາຊິກປະກັນສັງຄົມ / ປະກັນສຸຂະພາບ | ເຂົ້າເຖິງການບໍລິການສາທາລະນະສຸກທີ່ຈຳເປັນພື້ນຖານ | ໄດ້ຮັບເງິນຖົມຊຸມ ຫຼື ຮັບປິ່ນປົວຟຣີ (ເຊັ່ນ: ຜູ້ບໍ່ມີປະກັນ, ຜູ້ທຸກຍາກ, ເດັກນ້ອຍ, ຜູ້ທີ່ຢູ່ໃນໄວຈະເລີນພັນ ຫຼື ໄວສູງອາຍຸ) |
| ອຸດໜູນລູກ ແລະ ຄອບຄົວ ສຳລັບຜູ້ປະກັນຕົນ | ຄ້ຳປະກັນລາຍຮັບພື້ນຖານສຳລັບເດັກນ້ອຍ, ແລະ ເຂົ້າເຖິງໂພຊະນາການ, ການດູແລເບິ່ງແຍງ ແລະ ການສຶກສາ | ອຸດໜູນເດັກນ້ອຍ/ຄອບຄົວ ໃນຮູບແບບຂອງເງິນສົດ, ສິນຄ້າ ຫຼື ການບໍລິການ ຕາມຄວາມຕ້ອງການ ຫຼື ແລ້ວແຕ່ເງື່ອນໄຂທີ່ກ່ຽວກັບພຶດຕິກຳຂອງພໍ່ແມ່ |
| ມີເງິນອຸດໜູນໄລຍະສັ້ນ ກໍລະນີທີ່ເຈັບປ່ວຍ, ວ່າງງານ, ເກີດລູກ ແລະ ປະສົບອຸບັດເຫດຈາກການເຮັດວຽກ. | ຄ້ຳປະກັນລາຍຮັບຂັ້ນພື້ນຖານສຳລັບປະຊາກອນໃນໄວເຮັດວຽກ, ທີ່ເຈັບປ່ວຍ, ວ່າງງານ, ເກີດລູກ. ພິການ ແລະ ອື່ນໆ | ອຸດໜູນຮູບແບບຂອງເງິນສົດ, ສິນຄ້າຫຼືການບໍລິການ, ຫຼືການຄ້ຳປະກັນໃນການຈ້າງງານ |
| ມີເງິນບຳນານໃນກໍລະນີແກ່ເຖົ້າ, ປ່ອຍການ ແລະ ເສຍຜູ້ທີ່ເປັນເສົາຫຼັກຂອງຄອບຄົວ. | ມີເງິນບຳນານ, ມີການເບິ່ງແຍງດູແລ ແລະ ມີການບໍລິການສຳລັບຜູ້ສູງອາຍຸ ແລະ ຜູ້ພິການ | ອຸດໜູນຜູ້ສູງອາຍຸໃນຮູບແບບເປັນເງິນສົດ, ສິນຄ້າ ຫຼື ການບໍລິການ |

# ການຂະຫຍາຍການປົກປ້ອງສັງຄົມ: ວິທີການແບບຂັ້ນໄດ

- ເພື່ອພັດທະນາລະດັບການປົກປ້ອງໃຫ້ສູງຂຶ້ນເລື້ອຍໆແທນທີ່ຈະໃຫ້ເປັນພຽງແຕ່ລະດັບພື້ນຖານ
- ໃນຂະນະທີ່ເສດຖະກິດເຕີບໂຕ ແລະ ມີພື້ນທີ່ສຳລັບງົບປະມານ, ລະບົບປົກປ້ອງສັງຄົມສາມາດ ແລະ ຄວນຈະກ້າວຂຶ້ນໄປແບບ "ຂັ້ນໄດ"

## ວິທີການແບບ "ຂັ້ນໄດ"




**ມິຕິທາງຕັ້ງ** – ສະໜອງລະດັບການອຸດໜູນການປົກປ້ອງສັງຄົມໃຫ້ສູງຂຶ້ນ ແລະ ໃຫ້ການບໍລິການຜູ້ຖືກປົກຄຸມໃຫ້ຫຼາຍຂຶ້ນ.

**ມິຕິທາງຂວາງ** – ປະກອບດ້ວຍການຂະຫຍາຍລະບົບປົກປ້ອງສັງຄົມຂັ້ນພື້ນຖານແຫ່ງຊາດໃຫ້ກວມເອົາຫຼາຍຄົນຂຶ້ນຕື່ມ, ໃຫ້ບູລິມະສິດແກ່ຄົນທຸກຍາກ ແລະ ຄົນດ້ອຍໂອກາດ ແລະ ຄ່ອຍຂະຫຍາຍອອກໄປຫາປະຊາຊົນທັງໝົດເທື່ອລະກ້າວ.

International Labour Organization

## ວິທີການແບບ “ຂັ້ນໄດ”



# -จบ -